587

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

~~ກະຊວງກະສິກຳ ແລະ~~ ປ່າໄມ້

ກົມປ່າໄມ້

ຮັບ ເລກທີ 1195

ວັນທີ 16/5/05

ເລກທີ 0376 /ກປ.ຈຕ.05

ນະຄອນຫຼວງວຽງຈັນ, ວັນທີ 12 MAY 2005

ຂໍ້ຕົກລົງ

ຂອງລັດຖະມົນຕີ

ວ່າດ້ວຍການແຕ່ງຕັ້ງຄະນະກອງເລຂາກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 89/ນຍ, ລົງວັນທີ 22/6/99 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 38/ນຍ, ລົງວັນທີ 21/2/2005.
- ອີງຕາມການຄົ້ນຄ້ວາ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຕົກລົງ :

<u>ມາດຕາ 1</u> : ແຕ່ງຕັ້ງ ຄະນະກອງເລຂາກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດັ່ງມີລາຍຊື່ລຸ່ມນີ້ :

1. ທ່ານ ອານົນ ຄຳຮຸ່ງ	ຫົວໜ້າກອງສົ່ງເສີມກະສິກຳ ແລະ ປ່າໄມ້	ເປັນ ຫົວໜ້າ
2. ທ່ານ ອິນປັນ ສູນທະນູສິນ	ຮອງຫົວໜ້າກົມປ່າໄມ້	ເປັນ ຮອງ.
3. ທ່ານ ຄຳພັນ ເໜືອນສິດທິດາ	ຮອງຫົວໜ້າກົມແຜນການ	ເປັນ ຄະນະ.
4. ທ່ານ ດຣ. ເພັດ ພົມພິພັກ	ຮອງຫົວໜ້າກອງສົ່ງເສີມ ກປ	ເປັນຄະນະ.
5. ທ່ານ ບົວຊ່ຳ ອິນທະລັງສີ	ຮອງຫົວໜ້າພະແນກບໍລິຫານກົມປ່າໄມ້	ເປັນຄະນະ

<u>ມາດຕາ 2</u> : ຄະນະດັ່ງກ່າວມີໜ້າທີ່ສ້າງແຜນເຄື່ອນໄຫວວຽກງານໃຫ້ຖືກຕ້ອງຕາມພາລະບົດບາດສິດ ແລະ ໜ້າທີ່ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ລະບຸໄວ້ໃນດຳລັດ 38/ນຍ ໃຫ້ໄດ້ຮັບຜົນດີ.

<u>ມາດຕາ 3</u> : ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕ. ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

<u>ບ່ອນນຳສົ່ງ</u> :

- ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ 1 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ
- ພາກສ່ວນກ່ຽວຂ້ອງບ່ອນລະ 1 ສະບັບ
- ເກັບມ້ຽນ 1 ສະບັບ

ດຣ. ຕີ ພົມມະສັກ